IOWA READING RESEARCH CENTER

A New Vision for Literacy Research in Iowa

# ການອ່ານແບບໂຕ້ຕອບ: ດຳເນີນການສົນທະນາກ່ຽວກັບປຶ້ມ

**ໂດຍ** Jessica Sidler Folsom, Ph.D.
ຜູ້ຊ່ວຍນັກວິທະຍາຝ່າຍຄົ້ນຄວ້າວິໃຈ, ສູນຄົ້ນຄວ້າວິໃຈເລື່ອງການອ່ານລັດໄອໂອວາ

ພໍ່ແມ່ ແລະ ຄູສອນໃນທົ່ວໂລກຍອມຮັບຄວາມສຳຄັນຂອງການອ່ານຕໍ່ກັບເດັກນ້ອຍ. ເຖິງແມ່ນ ແພດເດັກ ແລະ ໂຮງໝໍກໍ່ສົ່ງເສີມການອ່ານ. ແນວໃດກໍ່ຕາມ, ການອ່ານດັ່ງງສາມາດມີຄຸນຄ່າທາງການສຶກສາຫຼາຍກວ່າການຮັບໃຊ້ເປັນກິດຈະກຳເຕີມເຕັມກ່ອນເຂົ້ານອນ ຫຼື ກ່ອນອາຫານທ່ຽງ.

ມັນງ່າຍໃນການຈັບປຶ້ມອອກຈາກຖ້ານ, ອ່ານມັນ ແລະ ບາງທີຖາມສອງສາມຄຳຖາມເມື່ອອ່ານຈົບເລື່ອງ ໂດຍບໍ່ຕ້ອງຄິດຫຍັງຫຼາຍກ່ຽວກັບການເລືອກປຶ້ມ ຫຼື ຈຸດປະສົງຂອງການອ່ານເລື່ອງນັ້ນໆ. ບາງທີມັນແມ່ນການມັກຂອງເດັກ ຫຼື ມັນມີຄວາມຍາວພໍດີສຳລັບເວລາທີ່ຈັດສັນໄວ້. ບາງທີມັນຖືກກັບເນື້ອໃນການສອນຢູ່ຫ້ອງຮຽນຂອງອາທິດນັ້ນ. ແນວໃດກໍ່ຕາມ, ສິ່ງເຫຼົ່ານີ້ແມ່ນຕົວຢ່າງທັງໝົດທີ່ຜູ້ໃຫຍ່ຊີ້ນຳ. ຜູ້ໃຫຍ່ເລືອກປຶ້ມ, ອ່ານເລື່ອງ ແລະ ຖາມຄຳຖາມ ຫຼື ນຳພາການສົນທະນາ.

ທາງເລືອກທີ່ມີສ່ວນຮ່ວມກວ່າ ແລະ ໄດ້ຜົນດີກວ່າແມ່ນການອ່ານແບບສື່ສານຕອບກັບ ຫຼື ການອ່ານແບບໂຕ້ຕອບ. ການອ່ານແບບໂຕ້ຕອບແມ່ນຜູ້ໃຫຍ່ ແລະ ເດັກນ້ອຍມີການສົນທະນາໂຕ້ຕອບກັນກ່ຽວກັບຂໍ້ຄວາມ ຫຼື ບົດເລື່ອງທີ່ພວກເຂົາກຳລັງອ່ານ. ການສົນທະນາຂອງເຂົາເຈົ້າລວມມີການກຳນົດຄຳສັບໃໝ່, ການປັບປຸງຄວາມຄ່ອງແຄ້ວຂອງຄຳເວົ້າ, ການແນະນຳອົງປະກອບຂອງບົດເລື່ອງ ແລະ ການພັດທະນາທັກສະການເລົ່າເຫດການ.

ການຄົ້ນຄວ້າວິໃຈຊີ້ໃຫ້ເຫັນວ່າ ເມື່ອພໍ່ແມ່ ແລະ ຄູສອນວາງແຜນ ແລະ ປະຕິບັດການອ່ານແບບໂຕ້ຕອບຢ່າງເໝາະສົມ, ມັນກໍ່ສາມາດໃຫ້ຜົນດີໂດຍສະເພາະໃນການປັບປຸງທັກສະຕ່າງໆ ເຊັ່ນວ່າ ການຮັບຮູ້ຕົວພິມ, ພາສາເວົ້າ ແລະ ຄວາມເຂົ້າໃຈ. ສຳຄັນທີ່ສຸດ, ມັນຊ່ວຍສ້າງແບບຈຳລອງວ່າຜູ້ອ່ານທີ່ດີຄິດແນວໃດກ່ຽວກັບຂໍ້ຄວາມ ຫຼື ບົດເລື່ອງໃນຂະນະທີ່ເຂົາເຈົ້າກຳລັງອ່ານມັນ. ຜົນປະໂຫຍດຂອງການອ່ານແບບໂຕ້ຕອບບໍ່ພຽງແຕ່ສຳລັບເດັກທີ່ຍັງອ່ອນນ້ອຍເທົ່ານັ້ນ. ເຖິງແມ່ນວ່າແນວຄວາມຄິດແມ່ນເກີດຈາກການອ່ານປຶ້ມທີ່ມີພາບປະກອບສຳລັບເດັກບໍ່ກຽມ (Whitehurst et al., 1988), ແຕ່ເນື້ອໃນການຄົ້ນຄວ້າວິໃຈໃນວົງກວ້າງໄດ້ຂະຫຍາຍການໃຊ້ຂອງມັນໄປສູ່ເດັກໄວອື່ນ ແລະ ປະຊາກອນອື່ນໆ ລວມທັງນັກຮຽນທີ່ພິການ (What Works Clearinghouse, 2010), ຜູ້ອ່ານທີ່ມີຄວາມຫຍຸ້ງຍາກ (Swanson et al., 2011), ແລະ ຜູ້ຮຽນພາສາອັງກິດ (Brannon & Dauksas, 2014).


©IOWA READING RESEARCH CENTER 2017 

## ລະດັບຕ່າງໆຂອງຄຳຖາມໃນການອ່ານແບບໂຕ້ຕອບ

ການຈັດຕັ້ງປະຕິບັດຜ່ານມາຂອງການການອ່ານແບບໂຕ້ຕອບກ່ຽວຂ້ອງກັບການອ່ານປຶ້ມດຽວກັນຊ້ຳໄປຊ້ຳມາຫຼາຍເທື່ອ ແລະ ການສື່ສານຕອບກັບກ່ຽວກັບສາມລະດັບຂອງຄຳຖາມ (Flynn, 2011).

- ຄຳຖາມ **ລະດັບທີ 1** ແມ່ນຄຳຖາມພື້ນຖານປະເພດ "ຫຍັງ ຫຼື ແນວໃດ" ເຊິ່ງເນັ້ນໃສ່ສິ່ງທີ່ສາມາດເຫັນ (ຫຼື ອ່ານເຫັນ) ໃນທັນທີໃນຂໍ້ຄວາມ. ລະດັບທີ 1 ຍັງລວມເອົາການແນະນຳຄຳສັບໃໝ່. ຕົວຢ່າງ: ໃນຂະນະທີ່ຊີ້ໃສ່ຮູບ, ຜູ້ໃຫຍ່ອາດຈະຖາມວ່າ "ສັດນີ້ມີຕີນແນວໃດ?" ໃນທີ່ນີ້ ຜູ້ໃຫຍ່ກຳລັງຄາດຫວັງຄຳຕອບສະເພາະທີ່ຖືກຕ້ອງເພື່ອຂະຫຍາຍຄຳສັບທາງການເວົ້າຂອງເດັກນັ້ນ.
- ຄຳຖາມ **ລະດັບທີ 2** ແມ່ນຄຳຖາມເປີດປິດ ແລະ ຖືກໃຊ້ເພື່ອຊັກຊວນເອົາຄຳເຫັນຕອບຄືນຂອງເດັກນ້ອຍ. ຕົວຢ່າງ: ຜູ້ໃຫຍ່ອາດຈະຖາມວ່າ "ເກີດຫຍັງຂຶ້ນໃນສ່ວນນີ້ຂອງບົດເລື່ອງ?" ໃນທີ່ນີ້ ຜູ້ໃຫຍ່ກຳລັງສົ່ງເສີມໃຫ້ເດັກແບ່ງປັນສິ່ງທີ່ລາວຄິດກ່ຽວກັບບົດເລື່ອງ ແລະ ສ້າງໝາຍຈາກຂໍ້ຄວາມທີ່ອ່ານ.
- ຄຳຖາມ **ລະດັບທີ 3** ແມ່ນຄຳຖາມຂັ້ນສູງກວ່າ ແລະ ແນະນຳແນວຄວາມຄິດ ເຊັ່ນວ່າ ລັກສະນະຂອງຂໍ້ຄວາມ ແລະ ອົງປະກອບຂອງບົດເລື່ອງ. ຕົວຢ່າງ: ຜູ້ໃຫຍ່ອາດຈະຖາມວ່າ "ໃຜເປັນຕົວລະຄອນເອກ ແລະ ລາວຮູ້ສຶກແນວໃດ?" ນີ້ອາດຈະລວມມີຄຳຖາມທີ່ນຳພານັກຮຽນອອກຫ່າງຈາກຂໍ້ຄວາມ ແລະ ເຊື່ອມຕໍ່ບົດເລື່ອງກັບຊີວິດຈິງຂອງເຂົາເຈົ້າ. ຕົວຢ່າງ: "ເຈົ້າຈະຮູ້ສຶກແນວໃດຖ້າສິ່ງນັ້ນເກີດຂຶ້ນກັບເຈົ້າ?"

## ຄວາມແຕກຕ່າງລະຫວ່າງວິທີທີ່ຖືກຕ້ອງ ແລະ ວິທີທີ່ບໍ່ຖືກຕ້ອງໃນການນຳໃຊ້ການອ່ານແບບໂຕ້ຕອບ

ການອ່ານແບບໂຕ້ຕອບ...

- **ບໍ່ແມ່ນ** "ຄູສອນອ່ານ, ນັກຮຽນຟັງ"
- **ບໍ່ແມ່ນ** ຄູສອນນຳພາອ່ານ
- **ບໍ່ແມ່ນ** ຈຳກັດໃສ່ແຕ່ຂໍ້ຄວາມທີ່ເລົ່າເຫດການ ໂດຍມີການຖາມ ແລະ ການສົນທະນາເມື່ອອ່ານຈົບແລ້ວ
- **ບໍ່ແມ່ນ** ພຽງແຕ່ສຳລັບເດັກທີ່ຍັງນ້ອຍໆເທົ່ານັ້ນ

ການອ່ານແບບໂຕ້ຕອບ...

- **ແມ່ນ** ການອ່ານແບບສື່ສານຕອບກັບເຊິ່ງກັນແລະກັນ
- **ແມ່ນ** ການອ່ານທີ່ເອົານັກຮຽນເປັນໃຈກາງ
- **ຖືກ** ດຳເນີນໂດຍມີຂໍ້ຄວາມແບບເລົ່າເລື່ອງ ແລະ ອະທິບາຍສັບໂດຍມີຄຳຖາມ ແລະ ການສົນທະນາໃນຕະຫຼອດເວລາການອ່ານ
- **ແມ່ນ** ກິດຈະກຳທີ່ຈຳເປັນຕ້ອງມີການວາງແຜນຢ່າງລະອຽດ
- **ແມ່ນ** ການອ່ານສຳລັບນັກຮຽນໃນທຸກລະດັບຊັ້ນ

ເຖິງແມ່ນວ່າຈະມີຫຼາຍໆຍຸດທະສາດເພື່ອອຳນວຍຄວາມສະດວກໃຫ້ແກ່ສາມລະດັບຄຳຖາມໃນການອ່ານແບບໂຕ້ຕອບກໍຕາມ, ແຕ່ມີສອງຍຸດທະສາດທີ່ນິຍົມໃຊ້ກັນທີ່ມີຊື່ຫຍໍ້ວ່າ CROWD ແລະ PEER. ທັງສອງໄດ້ຖືກເວົ້າເຖິງໃນໂພສທ໌ຜ່ານມາຂອງບລັອກຂໍ້ມູນ IRRC ແລະ ໂພສທ໌ນີ້ຈະຂະຫຍາຍຄວາມກ່ຽວກັບສອງຍຸດທະສາດ ແລະ ໃຫ້ແຫຼ່ງຊັບພະຍາກອນອື່ນເພື່ອຊ່ວຍໃນການວາງແຜນກິດຈະກຳການອ່ານແບບໂຕ້ຕອບ.

## ການໃຊ້ຊິ້ນຄຳຖາມຕ່າງໆດ້ວຍ CROWD

CROWD ຖືກໃຊ້ເພື່ອຈື່ປະເພດຄຳຖາມຕ່າງໆທີ່ຈະຖາມ: ຄຳຖາມການປະກອບປະໂຫຍກໃຫ້ສຳເລັດ, ຄຳຖາມທວນຄວາມຈື່, ຄຳຖາມເປີດປິດ, ຄຳຖາມ "ຫຍັງ ຫຼື ແນວໃດ" ແລະ ການເວັ້ນໄລຍະຈາກບົດເລື່ອງ. ສ່ວນຂະຫຍາຍຂອງ CROWD ແມ່ນ CROWD-HS ເຊິ່ງຖືກໃຊ້ເພື່ອສົ່ງເສີມການກະຕຸ້ນການອອກຫ່າງຈາກບົດເລື່ອງທີ່ກ່ຽວຂ້ອງກັບເຮືອນ ແລະ ໂຮງຮຽນ. ນີ້ແມ່ນຕົວຢ່າງຂອງຄຳຖາມ CROWD-HS ສຳລັບບົດເລື່ອງທີ່ຈັກກັນດີ *ໝູນ້ອຍສາມໂຕ*.

**C** ຄຳຖາມການປະກອບປະໂຫຍກໃຫ້ຄົບຖ້ວນ: "ຂ້ອຍໂມໂຫ, ຂ້ອຍໃຈຮ້າຍ, ຂ້ອຍຈະ ___________ ___________ _________ ___________."

*ຄຳຕອບ: ເປົ່າເຮືອນຂອງເຈົ້າໃຫ້ພັງທະລາຍ.*

**R** ຄຳຖາມທວນຄວາມຈື່: ເຮືອນຫຼັງໃດທີ່ໝາປ່າໂຕໃຫຍ່ຊົ່ວຮ້າຍບໍ່ສາມາດເປົ່າໃຫ້ພັງທະລາຍໄດ້?

*ຄຳຕອບ: ເຮືອນທີ່ສ້າງດ້ວຍດິນຈີ່.*

**O** ຄຳຖາມເປີດປິດ: ເຈົ້າຄິດວ່າຍ້ອນຫຍັງໝູໂຕທຳອິດຈິ່ງສ້າງເຮືອນຂອງລາວດ້ວຍກອງເຟືອງ?

*ຄຳຕອບ: ມັນສ້າງໄດ້ງ່າຍ. ລາວຂີ້ຄ້ານ.*

"**W**" ຄຳຖາມຍ້ອນຫຍັງ ຫຼື ແນວໃດ: ສັດຊະນິດໃດໄລ່ຈັບໂຕໝູ?
*ຄຳຕອບ: ໝາປ່າ.*

**D** ການເວັ້ນໄລຍະຈາກບົດເລື່ອງ: ເຈົ້າຄິດວ່າໝູຮູ້ສຶກແນວໃດໃນເວລາທີ່ໝາປ່າພະຍາຍາມຈັບພວກມັນ?

*ຄຳຕອບ: (ຄຳຕອບຈະແຕກຕ່າງກັນ). ຢ້ານ, ໃຈຮ້າຍ, ເສຍໃຈ.*

**H** ຄຳຖາມກ່ຽວກັບເຮືອນ: ຖ້າທ່ານຈຳເປັນຕ້ອງສ້າງເຮືອນຂອງຫຼິ້ນຢູ່ເຮືອນ, ທ່ານຈະສ້າງເຮືອນແບບໃດ?

*ຄຳຕອບ: (ຄຳຕອບຈະແຕກຕ່າງກັນ). ເຮືອນຕົ້ນໄມ້, ເຕັນ, ປ້ອມຍາມ.*

**S** ຄຳຖາມກ່ຽວກັບໂຮງຮຽນ: ໝາປ່າແມ່ນຜູ້ທີ່ຂົ່ມເຫັງຄົນອື່ນ. ມັນຊົ່ວຮ້າຍຕໍ່ກັບໝູນ້ອຍສາມໂຕ. ເຈົ້າຈະເຮັດແນວໃດຖ້າມີຄົນຂົ່ມເຫັງເຈົ້າຢູ່ໂຮງຮຽນ?

*ຄຳຕອບ: (ຄຳຕອບຈະແຕກຕ່າງກັນ). ບອກຄູ. ບອກໃຫ້ພວກເຂົາຢຸດ. ບໍ່ສົນໃຈເຂົາເຈົ້າ.*

## ກະຕຸ້ນການສົນທະນາໂຕ້ຕອບເພີ່ມອີກດ້ວຍ PEER+PA

CROWD-HS ເປັນປະໂຫຍດສຳລັບການຈື່ປະເພດຄຳຖາມທີ່ຈະຖາມ, ແຕ່ຈື່ວ່າຈຸດສຳຄັນແມ່ນການກະຕຸ້ນໃຫ້ເກີດການສົນທະນາໂຕ້ຕອບກ່ຽວກັບບົດຄວາມ, ບໍ່ແມ່ນກະຕຸ້ນຄຳຕອບແບບຄຳດຽວ. ສາມາດໃຊ້ຍຸດທະສາດ PEER (**p** ກະຕຸ້ນ, **e** ປະເມີນ, **e** ຂະຫຍາຍ ແລະ **r** ເວົ້າຄືນ) ເພື່ອຊ່ວຍຜູ້ໃຫຍ່ສົ່ງເສີມການຕອບທີ່ເລິກເຊິ່ງກວ່າ. ສ່ວນຂະຫຍາຍຂອງ PEER ແມ່ນ PEER+PA ເຊິ່ງຖືກໃຊ້ເພື່ອເຕືອນບອກໃຫ້ຜູ້ໃຫຍ່ຊົມເຊີຍເດັກນ້ອຍສຳລັບການມີສ່ວນຮ່ວມໃນການສົນທະນາ ແລະ ຊ່ວຍເດັກນ້ອຍນຳໃຊ້ຄຳຕອບນັ້ນ ເພື່ອໃຫ້ມັນມີຄວາມໝາຍ. ອົງປະກອບເຫຼົ່ານີ້ຖືກນຳໃຊ້ໃນຕະຫຼອດການສົນທະນາກັບເດັກ. ນີ້ແມ່ນຕົວຢ່າງຂອງການໃຊ້ PEER+PA ດ້ວຍໜຶ່ງໃນບັນດາຄຳຖາມ CROWD-HS ຂ້າງເທິງ:

**P** ກະຕຸ້ນໃຫ້ເດັກເວົ້າບາງຢ່າງກ່ຽວກັບປຶ້ມ.

ຜູ້ໃຫຍ່: ສັດຊະນິດໃດໄລ່ຈັບໝູນ້ອຍສາມໂຕ?
*ເດັກ: ໝາປ່າ.*

**E** ປະເມີນຄຳຕອບຂອງເດັກ.

ຜູ້ໃຫຍ່ຄິດເອົາເອງ, "ແມ່ນ, ມັນແມ່ນໝາປ່າ, ແຕ່ພວກເຮົາສາມາດເພີ່ມຕື່ມອີກໃສ່ຄຳຕອບນັ້ນ".

**E** ຂະຫຍາຍຄຳຕອບຂອງເດັກ.

ຜູ້ໃຫຍ່: ແມ່ນ, ມັນແມ່ນໝາປ່າໂຕໃຫຍ່ທີ່ຊົ່ວຮ້າຍ!

**R** ເວົ້າຄືນການກະຕຸ້ນ.

ຜູ້ໃຫຍ່: ສັດຊະນິດໃດໄລ່ຈັບໝູນ້ອຍສາມໂຕ?
*ເດັກ: ໝາປ່າໂຕໃຫຍ່ທີ່ຊົ່ວຮ້າຍ!*

**P** ຊົມເຊີຍ ແລະ **A** ນຳໃຊ້ຄຳຕອບຂອງເດັກ.

ຜູ້ໃຫຍ່: ຖືກຕ້ອງ! ໝາປ່າໂຕໃຫຍ່ທີ່ຊົ່ວຮ້າຍໄລ່ຈັບໝູນ້ອຍສາມ. ເກັ່ງຫຼາຍທີ່ຈື່ບົດເລື່ອງໄດ້! ເຈົ້າຈະຮູ້ສຶກແນວໃດຖ້າເຈົ້າເຫັນໝາປ່າໂຕໃຫຍ່ທີ່ຊົ່ວຮ້າຍ?
*ເດັກ: (ຄຳຕອບຈະແຕກຕ່າງກັນ). ຂ້ອຍຈະຢ້ານ ແລະ ແລ່ນໜີ.*

## ການສອນຄຳສັບໃນຕະຫຼອດການອ່ານແບບໂຕ້ຕອບ

ຈົ່ງຈື່ວ່າເປົ້າໝາຍສຳຄັນຂອງການອ່ານແບບໂຕ້ຕອບແມ່ນເພື່ອຂະຫຍາຍທັກສະພາສາເວົ້າຂອງນັກຮຽນ ໂດຍສະເພາະຄຳສັບ. ວິທີໜຶ່ງໃນການເຮັດສິ່ງນີ້ແມ່ນການເຂົ້າຮ່ວມໃນກິດຈະກຳກ່ອນການອ່ານເພື່ອສອນຄຳສັບສຳຄັນ. ຄືກັນກັບທີ່ມີຫຼາຍລະດັບຄຳຖາມເພື່ອອຳນວຍຄວາມສະດວກການສື່ສານໂຕ້ຕອບກ່ຽວກັບບົດຄວາມ, ມັນງ່າຍໃນການຄິດກ່ຽວກັບປະມວນຄຳສັບໃນສາມຊັ້ນດັ່ງນີ້:

- ຄຳສັບ **ຊັ້ນທີ 1** ແມ່ນຄຳສັບພື້ນຖານທີ່ຄວນຢູ່ໃນປະມວນຄຳສັບສຳລັບການຮັບຟັງ ແລະ ການເວົ້າຂອງເດັກນ້ອຍ. ຄຳສັບຊັ້ນທີ 1 ໃນເລື່ອງໝູນ້ອຍສາມໂຕ ຄວນລວມມີ: ເຮືອນ, ໝູ, ໝາປ່າ.

- ຄຳສັບ **ຊັ້ນທີ 2** ເກີດຂຶ້ນດ້ວຍຄວາມຖີ່ສູງໃນຂໍ້ຄວາມສຳລັບຜູ້ໃຊ້ພາສາທີ່ເປັນຜູ້ໃຫຍ່. ຄຳສັບເຫຼົ່ານີ້ຄວນຖືກສອນເພື່ອຊ່ວຍຂະຫຍາຍປະມວນຄຳສັບສຳລັບການຟັງ ແລະ ການເວົ້າຂອງເດັກນ້ອຍ. ຄຳສັບຊັ້ນທີ 2 ໃນເລື່ອງໝູນ້ອຍສາມໂຕ ອາດຈະແມ່ນ ໂຕໃຫຍ່ສຸດ (ບາງສະບັບຂອງນິດເລື່ອງນີ້ເອີ້ນໝູໂຕທຳອິດເປັນຜູ້ໂຕໃຫຍ່ສຸດໃນສາມໂຕ).
- ຄຳສັບ **ຊັ້ນທີ 3** ແມ່ນຄຳສັບສະເພາະສາຂາ ແລະ ຮຽນໄດ້ດີທີ່ສຸດເມື່ອຕ້ອງການໃນຂົງເຂດເນື້ອຫາ ຫຼື ສະພາບການສະເພາະໃດໜຶ່ງ. ຄຳສັບເຫຼົ່ານີ້ເປັນໄປໄດ້ໜ້ອຍກວ່າທີ່ຈະເກີດຂຶ້ນໃນນິດເລື່ອງ ເຊັ່ນ ໝູນ້ອຍສາມໂຕ. ແນວໃດກໍຕາມ, ນິດເລື່ອງສະບັບທີ່ຊັບຊ້ອນກວ່າອາດຈະລວມມີຄຳສັບຊັ້ນທີ 3 ສຳລັບເຄື່ອງມືການກໍ່ດິນຈີ່ທີ່ໝູໂຕທີສາມໃຊ້: ມີປະທາຍ.

ເຖິງແມ່ນວ່າບາງຄຳສັບສາມາດຖືກແນະນຳໄດ້ໃນລະຫວ່າງການອ່ານແບບໂຕ້ຕອບ, ແຕ່ມັນສຳຄັນໃນການລະບຸກ່ອນລ່ວງໜ້າ ແລະ ສອນຄຳສັບຕ່າງໆທີ່ອາດຈະລົບກວນຄວາມເຂົ້າໃຈນິດເລື່ອງຂອງນັກຮຽນ. ຄູສອນທີ່ເປັນຜູ້ໃຫຍ່ສາມາດລະບຸຄຳສັບຊັ້ນທີ 2 ທີ່ຈະເປັນປະໂຫຍດສຳລັບການເຂົ້າໃຈຂໍ້ຄວາມປັດຈຸບັນ ແລະ ທີ່ເປັນໄປໄດ້ວ່າເດັກຈະໃຊ້ ຫຼື ອ່ານເຫັນໃນສະພາບການອື່ນ.

ດຽວນີ້ພວກເຮົາກຳລັງທຳຄວາມເຂົ້າໃຈໃນລະດັບ, ຊັ້ນ ແລະ ລຳດັບຕົວອັກສອນ, ທ່ານຈະຈື່ພວກມັນໄດ້ທັງໝົດແນວໃດ, ນຳພວກມັນມາລວມກັນ ແລະ ເຂົ້າຮ່ວມໃນການອ່ານແບບໂຕ້ຕອບຢ່າງແທ້ຈິງໄດ້ແນວໃດ? ສິ່ງສຳຄັນທີ່ສຸດແມ່ນການກຽມຕົວຢ່າງພຽງພໍ! ນີ້ລວມເອົາການເລືອກຂໍ້ຄວາມທີ່ເໝາະສົມທີ່ສົ່ງເສີມການສົນທະນາໂຕ້ຕອບ, ການລະບຸຄຳສັບເພື່ອສອນກ່ອນການອ່ານ, ການຄິດກ່ຽວກັບຄຳຖາມ CROWD-HS ແລະ ການຄາດຄະເນຄຳຕອບຂອງເດັກ ເຊິ່ງທ່ານສາມາດໃຊ້ PEER+PA ເພື່ອຂະຫຍາຍການສົນທະນາໂຕ້ຕອບໄດ້. ສາມາດເອົາ **ຄຳແນະນຳການອ່ານແບບສື່ສານຕອບກັບ** ຂ້າງລຸ່ມເຂົ້າໃນປຶ້ມທຸກໆຫົວໄດ້ເພື່ອຊ່ວຍທ່ານວາງແຜນຄຳສັບ ແລະ ຄຳຖາມທີ່ທ່ານຈະລວມເອົາ. ຄວນຖາມຄຳຖາມຕ່າງໆໃນຕະຫຼອດນິດເລື່ອງ, ບໍ່ແມ່ນພຽງແຕ່ຕອນອ່ານຈົບເທົ່ານັ້ນ, ສະນັ້ນ ຢ່າລືມບັນທຶກເລກທີໜ້າສຳລັບແຕ່ລະຄັ້ງ! ນີ້ຈະເຮັດໃຫ້ມັນງ່າຍຂຶ້ນສຳລັບທ່ານ ຫຼື ຄົນອື່ນໃນການຊອກຫາເປົ້າໝາຍສຳລັບຜູ້ເລີ່ມການສົນທະນາໃນເວລາຈັດຕັ້ງປະຕິບັດການອ່ານແບບໂຕ້ຕອບ.

## ເຄື່ອງໝາຍຂັ້ນໜ້າປຶ້ມ/ແນວສອດຂັ້ນໜ້າປຶ້ມເພື່ອຊ່ວຍໃນການອ່ານແບບໂຕ້ຕອບ

ຊຸດແນວສອດຂັ້ນໜ້າປຶ້ມແນະນຳການອ່ານແບບສື່ສານຕອບກັບສາມຢ່າງສຳລັບການດາວໂຫຼດ
ຊຸດເຄື່ອງໝາຍຂັ້ນໜ້າປຶ້ມ CROWD ສີ່ຢ່າງສຳລັບການດາວໂຫຼດ
ຊຸດເຄື່ອງໝາຍຂັ້ນໜ້າປຶ້ມ PEER ສີ່ຢ່າງສຳລັບການດາວໂຫຼດ

## ເອກະສານອ້າງອີງ

Brannon, D., & Dauksas, L. (2014). ປະສິດທິຜົນຂອງການອ່ານແບບໂຕ້ຕອບໃນການເພີ່ມພາສາເວົ້າຂອງເດັກນ້ອຍຫ້ອງຮຽນບໍກຽມທີ່ຮຽນພາສາອັງກິດ. *ການຄົ້ນຄວ້າວິໄຈສາກົນໃນການສຶກສາກ່ອນໄວຮຽນ*
, *5*, 1-10.

Flynn, K. S. (2011). ການພັດທະນາທັກສະພາສາເວົ້າຂອງເດັກຜ່ານການອ່ານແບບໂຕ້ຕອບ: ຂໍ້ແນະນຳສຳລັບການຈັດຕັ້ງປະຕິບັດ. *ການສອນເດັກພິເສດ*, *44*, 8-16. doi: 10.1177/004005991104400201

Stephenson, J. (2010). ການອ່ານປຶ້ມເປັນສະພາບການແຊກແຊງຊ່ວຍເຫຼືອສຳລັບເດັກທີ່ເລີ່ມໃຊ້ສັນຍາລັກຮູບພາບສຳລັບການສື່ສານ. *ວາລະສານກ່ຽວກັບຄວາມພິການດ້ານພັດທະນາການ ແລະ ຮ່າງກາຍ*, *22*, 257-271. doi: 10.1007/s10882-009-9164-6

Swanson, E., Vaughn, S., Wanzek, J., Petscher, Y., Heckert, J., Cavanaugh, C., . . . Tackett, K. (2011). ການປະສົມປະສານການແຊກແຊງຊ່ວຍເຫຼືອການອ່ານດັງໆໃນຜົນຮັບການອ່ານກ່ອນໂຮງຮຽນໃນຊັ້ນບໍາກຸງມຈົນຮອດຊັ້ນປີທີ 3 ທີ່ມີຄວາມສ່ຽງມີຄວາມຫຍຸ້ງຍາກໃນການອ່ານ. *ວາລະສານກ່ຽວກັບຄວາມພິການດ້ານການຮຽນຮູ້*, *44*, 258-275. doi: 10.1177/0022219410378444 | [Full article]

What Works Clearinghouse (2010). *ລາຍງານການແຊກແຊງຊ່ວຍເຫຼືອຂອງ What Works Clearinghouse ການແຊກແຊງຊ່ວຍເຫຼືອໃນການສຶກສາກ່ອນໂຮງຮຽນສຳລັບເດັກນ້ອຍທີ່ພິການ: ການອ່ານແບບໂຕ້ຕອບ.* Washington, DC: ສະຖາບັນວິທະຍາສາດການສຶກສາ. ຄັດຈ້ອນຈາກ http://ies.ed.gov/ncee/wwc/InterventionReport/136

Whitehurst, G. J., Falco, F. L., Lonigan, C. J., Fischel, J. E., DeBaryshe, B. D., Valdez-Menchaca, M. C, & Caulfield, M. (1988). ເລັ່ງການພັດທະນາດ້ານພາສາຜ່ານການອ່ານປຶ້ມທີ່ມີພາບປະກອບ. *ຈິດຕະວິທະຍາດ້ານພັດທະນາການ*, *24*, 552-559. doi: 10.1037/0012-1649.24.4.552